ວຽງຈັນ, ສປປ ລາວ
ມິຖຸນາ 16, 2010

# ເຊີນຍື່ນບົດສະເໜີແນວຄວາມຄິດກ່ຽວກັບໂຄງການ
## No. CFPCN/LAO/SGP/OP4-0002/JUN2010

ແຜນງານໂຄງການຂະໜາດນ້ອຍ ສປປ ລາວ, ກອງທຶນສິ່ງແວດລ້ອມໂລກ ມີຄວາມຍິນດີ ແຈ້ງມາຍັງບັນດາອົງການຈັດຕັ້ງທາງສັງຄົມ ເຊັ່ນ ສະມາຄົມບໍ່ຫວັງຜົນກຳໄລ, ອົງການຈັດຕັ້ງຊຸມຊົນ, ອົງການຈັດຕັ້ງມະຫາຊົນ ແລະ ຊຸມຊົນ, ສະຖາບັນການສຶກສາ ກ່ຽວກັບການຍື່ນ **"ບົດສະເໜີແນວຄວາມຄິດກ່ຽວກັບໂຄງການ"** ເພື່ອຂໍທຶນຊ່ວຍເຫຼືອລ້າ ບໍ່ເກີນ 50,000 ໂດລາສະຫະລັດ (ຫ້າສິບພັນ). ໂຄງການທີ່ຈະຂໍທຶນໃນຄັ້ງນີ້ ແມ່ນເລັ່ງໃສ່ແກ້ໄຂບັນຫາທາງດ້ານສິ່ງແວດລ້ອມໃນຫ້າຂົງເຂດວຽກບໍລິມະສິດຂອງແຜນງານໂຄງການຂະໜາດນ້ອຍ ສປປ ລາວ ເຊັ່ນ:

1. ວຽກງານອະນຸລັກຊີວະນາໆພັນ
2. ວຽກການຫຼຸດຜ່ອນ ແລະ ປັບໂຕເຂົ້າກັບ ການປ່ຽນແປງຂອງດິນຟ້າອາກາດ
3. ວຽກງານການປ້ອງການການເຊາະເຈື່ອນຂອງດິນ
4. ວຽກງານປົກປ້ອງສາຍນ້ຳສາກົນ
5. ວຽກງານຈຳກັດ ຫຼືຫຼຸດຜ່ອນການນຳໃຊ້ສານເຄມີອັນຕະລາຍ

ເຂດເປົ້າໝາຍຂອງໂຄງການທີ່ຈະຂໍທຶນ ຕ້ອງຢູ່ໃນບັນດາເມືອງທຸກຍາກ ແລະ ທຸກທີ່ສຸດ (72 ເມືອງທຸກຍາກ, 47 ເມືອງທຸກທີ່ສຸດ)

ອົງການຈັດຕັ້ງທີ່ມີເງື່ອນໄຂຕາມຂ້າງເທິງສາມາດສົ່ງ "ບົດສະເໜີແນວຄວາມຄິດກ່ຽວກັບໂຄງການ" ໄດ້ໜຶ່ງບົດ (ໜຶ່ງໂຄງການ), ພາຍໃນ **ວັນທີ 31 ກໍລະກົດ (7) 2010**

ແບບຟອມສຳລັບການຂຽນ **"ບົດສະເໜີແນວຄວາມຄິດກ່ຽວກັບໂຄງການ"** ສາມາດອັດເອົາຕາມທີ່ຢູ່ລຸ່ມນີ້ **http://www.undplao.org/whatwedo/small%20grants.php** ຫຼື www.undplao.org – what do we do – Environment and Energy – Small Grant Programme

ຫຼື ພົວພັນເອົາ ກັບ **ທ່ານ ເພັດດາວອນ ຈະເລີນສຸກ. ຫ້ອງການ ອົງການສະຫະປະຊາຊາດ ເພື່ອການພັດທະນາ ສປປ ລາວ, ຖະໜົນລ້ານຊ້າງ, ຕູ້ໄປສະນີ 345, ຫຼື ສົ່ງທາງ ອີເມວໄດ້ທີ່** phet.chaleunsouk@undp.org
**ແບບຟອມກ່ຽວກັບ "ບົດສະເໜີແນວຄວາມຄິດກ່ຽວກັບໂຄງການ" ສາມາດອັດເອົາໄດ້ທີ່**